JDB ເປີດກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ 06 ເດືອນ ຕົ້ນປີ 2026 ແລະ ທິດທາງການດຳເນີນທຸລະກິດ 06 ເດືອນ ທ້າຍປີ 2026











ໃນຕອນບ່າຍ ວັນທີ 22 ກໍລະກົດ 2026, ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ໄດ້ເປີດກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ 06 ເດືອນຕົ້ນປີ ແລະ ທິດທາງການດຳເນີນທຸລະກິດ 06 ເດືອນ ທ້າຍປີ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ ນະຄອນຫຼວງວຽງຈັນ. ພາຍໃຕ້ການເປັນປະທານກອງປະຊຸມຂອງ ທ່ານ ສຸນທອນ ຈັນທະວົງ, ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ, ພ້ອມດ້ວຍ ຄະນະຜູ້ບໍລິຫານ, ຄະນະພະແນກ ແລະ ໜ່ວຍບໍລິການ ພາຍໃນ ນະຄອນຫຼວງວຽງຈັນ. ນອກຈາກນີ້, ຍັງມີບັນດາໜ່ວຍບໍລິການຕ່າງແຂວງ ເຂົ້າຮ່ວມກອງປະຊຸມຜ່ານລະບົບ Video Conference ເຊິ່ງເປັນກຽດກ່າວເປີດກອງປະຊຸມຢ່າງເປັນທາງການ ໂດຍ ທ່ານ ນາງ ຄອນສະຫວັນ ວິຊາເທບ, ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ.

ກອງປະຊຸມໄດ້ມີການຮັບຟັງການລາຍງານ ເຖິງຜົນສຳເລັດວຽກງານຫຼາຍໆ ດ້ານ, ໃນໄຕມາດ II ຂອງປີ 2026 ທີ່ຜ່ານມາ ໂດຍ ທຄຮ ສາມາດສ້າງຍອດຊັບສິນລວມ ປະຕິບັດໄດ້ 84% ຂອງແຜນປີ 2026, ມີຍອດລາຍຮັບລວມ ເມື່ອທຽບໃສ່ແຜນປີ 2026 ສາມາດປະຕິບັດໄດ້ 55.64%, ການສະໜອງສິນເຊື່ອປະຕິບັດໄດ້ 88% ເມື່ອທຽບໃສ່ແຜນປີ 2026, ດ້ານຜົນການດຳເນີນທຸລະກິດ ໃນໄຕມາດ II ຂອງປີ 2026 ທຄຮ ສາມາດສ້າງລາຍຮັບຫຼັງຫັກອາກອນ ປະຕິບັດໄດ້ 38.17% ທຽບໃສ່ແຜນການປີ 2026.

ຕົວເລກຜົນສຳເລັດອັນໂດດເດັ່ນນີ້ ບໍ່ພຽງແຕ່ສະແດງເຖິງການເຕີບໂຕຢ່າງຕໍ່ເນື່ອງ, ແຕ່ຍັງເປັນສິ່ງຢັ້ງຢືນ ເຖິງຄວາມໝັ້ນຄົງທາງດ້ານຖານະການເງິນ ແລະ ຄວາມສາມາດໃນການບໍລິຫານຄວາມສ່ຽງ ທີ່ມີປະສິດທິພາບສູງ ພາຍໃຕ້ສະພາວະເສດຖະກິດ ທີ່ມີຄວາມຜັນຜວນ, ເຮັດໃຫ້ ທຄຮ ຍັງຄົງເປັນທະນາຄານທຸລະກິດຊັ້ນນຳ ທີ່ໄດ້ຮັບຄວາມໄວ້ວາງໃຈ ແລະ ມີສະພາບຄ່ອງທີ່ແຂງແຮງ ພ້ອມທີ່ຈະຮອງຮັບການບໍລິການລູກຄ້າ ໃນທຸກລະດັບຢ່າງມີສະຖຽນລະພາບ.

ກອງປະຊຸມຄັ້ງນີ້ ໄດ້ປັບປຸງໂຄງຮ່າງການຈັດຕັ້ງ ຂອງສະພາບໍລິຫານ ແລະ ໂຄງຮ່າງການຈັດຕັ້ງ ຂອງຄະນະອຳນວຍການ ທະນາຄານຮ່ວມພັດທະນາ ມະຊົນ ໂດຍສະເພາະ ແມ່ນການມອບ-ຮັບໜ້າທີ່ ລະຫວ່າງ ປະທານສະພາບໍລິຫານ (ຜູ້ເກົ່າ) ແລະ ປະທານສະພາບໍລິຫານ (ຜູ້ໃໝ່), ການມອບ-ຮັບ ໜ້າທີ່ຜູ້ອຳນວຍການ (ຜູ້ເກົ່າ) ແລະ ຜູ້ອຳນວຍການ (ຜູ້ໃໝ່) ເພື່ອໃຫ້ແທດເໝາະກັບສະພາບການປັດຈຸບັນ ເພື່ອຂັບເຄື່ອນ ທະນາຄານຮ່ວມພັດທະນາ ມະຫາຊົນ ໃຫ້ດີຂຶ້ນກວ່າເກົ່າ, ໄດ້ມີການມອບຮັບໜ້າທີ່ ຂອງສະພາບໍລິຫານ ແລະ ຄະນະອຳນວຍການ ຊຸດເກົ່າ ໃຫ້ຄະນະສະພາບໍລິຫານ ແລະ ຄະນະອຳນວຍການ ຊຸດໃໝ່ ຢ່າງເປັນທາງການ.

ຈາກນັ້ນໄດ້ຮັບຟັງການໂອ້ລົມຈາກ ທ່ານ ເອກະພັນ ພະພິທັກ, ປະທານຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ຜົນງານທີ່ປະຕິບັດໄດ້ ໃນໄຕມາດ II ປີ 2026 ທີ່ຜ່ານມາ ແລະ ຍົກໃຫ້ເຫັນ ສະພາບເສດຖະກິດຂອງໂລກ ຍັງມີຄວາມຫຍຸ້ງຍາກ ຢູ່ໃນພາວະສະລໍ່ຕິ, ສະພາບການຂອງໂລກ ມີການຜັນແປຢ່າງສັບສົນ, ທ່ານໄດ້ຮຽກຮ້ອງໃຫ້ຄະນະຜູ້ບໍລິຫານ ຊຸດໃໝ່ ແລະ ພະນັກງານທຸກຄົນ ເອົາໃຈໃສ່ວຽກງານຂອງຕົນໃຫ້ດີຂຶ້ນກວ່າເກົ່າ ເພື່ອບັນລຸເປົ້າໝາຍທີ່ວາງໄວ້ ພ້ອມທັງໄດ້ຮຽກຮ້ອງໃຫ້ມີຄວາມສາມັກຄີກັນ ເປັນປຶກແຜ່ນ ເພື່ອໃຫ້ບັນລຸຜົນສຳເລັດທີ່ວາງໄວ້. ທະນາຄານຮ່ວມພັດທະນາ ມະຫາຊົນ ມຸ່ງໝັ້ນພັດທະນາການບໍລິການທີ່ເປັນເລີດ, ວ່ອງໄວ ແລະ ທັນສະໄໝ ເຊື່ອມຕໍ່ກັບສາກົນ ຖືເອົາຄວາມຕ້ອງການຂອງລູກຄ້າເປັນຫຼັກ, ພັດທະນາຜະລິດຕະພັນ ທາງການເງິນໃໝ່ຢ່າງສະໝ່ຳສະເໝີ ດ້ວຍລະບົບເທັກໂນໂລຢີທີ່ທັນສະໄໝ ປະສານກັບການບໍລິການທີ່ໂດດເດັ່ນຂອງພະນັກງານ, ສ້າງຜົນປະໂຫຍດສູງສຸດ ໃຫ້ກັບທຸກຝ່າຍ ເປັນສ່ວນສຳຄັນ ໃນການພັດທະນາປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງ.

ທະນາຄານຮ່ວມພັດທະນາ ມະຫາຊົນ **“ເຕີບໃຫຍ່ໄປພ້ອມກັນ”**.